| | |
|---|---|
| ຊື່ເລື່ອງ | ຜົນການໃຊ້ສື່ຈິງເພື່ອເພີ່ມພູນຄວາມສາມາດດ້ານການຟັງແລະການເວົ້າພາສາອັງກິດຂອງນັກສຶກສາລາວລະດັບປະລິນຍາຕີໃນຂະແໜງການບໍລິການ |
| ຜູ້ວິໄຈ | ພອນສຸຂະ ອິນສີຊຽງໃໝ່ |
| ທີ່ປຶກສາວິທະຍາວິພົນ | ຜູ້ຊ່ວຍສາດສະດາຈານ ດອກເຕີ ນະອະມິນ ປຣະຊາບັນ ທີ່ປຶກສາຫຼັກ |
| | ຜູ້ຊ່ວຍສາດສະດາຈານ ສຸທາມາດ ຄິດຊະລອັດ ທີ່ປຶກສາຮ່ວມ |
| ປະລິນຍາ | ສິນລະປະສາດມະຫາບັນດິດ **ສາຂາວິຊາ** ພາສາອັງກິດ |
| ສະຖານທີ່ສຶກສາ | ມະຫາວິທະຍາໄລ ລາດສະພັດ ບຸລີລຳ **ປີທີ່ພິມ** 2557 |


## ຄຳນຳ

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ1)ສຶກສາປະສິດຕິພາບຂອງການໃຊ້ສື່ຈິງເພື່ອພັດທະນາຄວາມສາມາດດ້ານການຟັງແລະການເວົ້າພາສາອັງກິດຂອງນັກສຶກສາລາວລະດັບປະລິນຍາຕີໃນຂະແໜງການບໍລິການ2)ປຽບທຽບຄວາມສາມາດການຟັງແລະການເວົ້າພາສາອັງກິດຂອງນັກສຶກສາລາວກ່ອນການໃຊ້ສື່ຈິງໃນຂະແໜງການບໍລິການແລະ3)ສຶກສາຄວາມພໍໃຈຂອງນັກສຶກສາລາວທີ່ມີຕໍ່ສື່ຈິງເພື່ອພັດທະນາຄວາມສາມາດດ້ານການຟັງແລະການເວົ້າພາສາອັງກິດຂອງນັກສຶກສາລາວລະດັບປະລິນຍາຕີໃນຂະແໜງການບໍລິການ ກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ເປັນນັກສຶກສາລາວປີທີ3ຈຳນວນ41ຄົນວິທະຍາໄລຄູສະຫວັນນະເຂດເມືອງໄກສອນພົມວິຫານແຂວງສະຫວັນນະເຂດສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນພາກຮຽນທີສອງ ປີສຶກສາ 2012 ໂດຍການສຸ່ມຢ່າງງ່າຍເຄື່ອງມືທີ່ໃຊ້ໃນການທົດລອງປະກອບມີ ແຜນການຮຽນ - ການສອນຈຳນວນ8ບົດແບບກິດຈະກຳເພື່ອທົດສອບການຮຽນ50ຂໍ້ແລະແບບຟອມສອບຖາມຄວາມພຶງພໍໃຈສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນເຊັ່ນຄ່າຮ້ອຍໄລ່ຄ່າສະເລ່ຍສ່ວນບຽງເບນມາດຕະຖານແລະ Dependent Sample t-test ຜົນການສຶກສາເຫັນວ່າ

1. ແຜນການຈັດການຮຽນຮູ້ທີ່ໃຊ້ສື່ຈິງ8ບົດມີປະສິດຕິພາບເທົ່າກັບ 79.56 / 80.10 ສູງກວ່າເກນທີ່ກຳນົດຄື 75/75
2. ຜົນທາງການຮຽນຂອງນັກສຶກສາທີ່ຮຽນດ້ວຍສື່ຈິງຫຼັງຮຽນສູງກວ່າການຮຽນຢ່າງໃນສຳຄັນທາງສະຖິຕິທີ່ລະດັບ .01
3. ນັກສຶກສາມີຄວາມພຶງພໍໃຈຕໍ່ການຮຽນດ້ວຍສື່ຈິງກ່ຽວກັບຂະແໜງການບໍລິການໂດຍລວມຢູ່ໃນລະດັບດີຫຼາຍ


มหาวิทยาลัยราชภัฏบุรีรัมย์ Buriram Rajabhat University